ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**
**BANQUE POUR LE COMMERCE EXTERIEUR LAO PUBLIC**

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 096 /ທຄຕລ 2020

ນະຄອນຫຼວງວຽງຈັນ, ວັນທີ: 30 NOV 2020

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາບໍລິສັດ, ຫ້າງຮ້ານຕົວແທນຈຳໜ່າຍ ສິນຄ້າເຄື່ອງທີ່ລະນຶກ ຢູ່ໃນນະຄອນຫລວງວຽງຈັນ.

**ເລື່ອງ :** ເຊີນເຂົ້າຮ່ວມການປະມູນລາຄາເຄື່ອງທີ່ລະນຶກ ຂອງ ທຄຕລ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍ) ເພື່ອເຂົ້າຮ່ວມການປະມູນລາຄາ ທີ່ ທຄຕລ ຈະນຳໃຊ້ເປັນເຄື່ອງທີ່ລະນຶກໃຫ້ແກ່ລູກຄ້າ ແລະ ພະນັກງານ ຂອງທຄຕລ ຕາມລາຍລະອຽດລຸ່ມນີ້:

| ລ/ດ | ລາຍການ | ລາຍລະອຽດສິນຄ້າ | ຈຳນວນ |
|---|---|---|---|
| 1 | **ຄັນຮົ່ມກ້ານຍາວ**<br>ຄັນຮົ່ມຂະໜາດ: 23 ນິ້ວ ໂຄ້ງ ແລະ ກ້ານໄຍເຄືອບແກ້ວ<br>ປະເພດຜ້າ: ຜ້າ 190T pongee ກັນ UV<br>ກ້ານຈັບ: ສີລີໂຄນເຄືອບໂຕ C, ໃຊ້ງານແບບເມນວນ |  | 22.300 ກ້ານ |
| 2 | **ຄັນຮົ່ມກ໊ອບ**<br>ກ້ານຍາວ ແລະ ມີ 02 ຊັ້ນ<br>- ປະເພດຜ້າ: ຜ້າ 190T pongee ກັນ UV<br>- ຄັນຮົ່ມຂະໜາດ: 1 ແມັດ<br>- ເສັ້ນຜ່າສູນກາງ 131 CM<br>- ປຸ່ມກົດແບບໂອໂຕ້ |  | 500 ກ້ານ |
| 3 | **ບິກຂຽນ**<br>- ໂຕບິກຍາວ14,7cm ຮອບວຽນມີຈັບເສັ້ນຜ່າກາງ 1cm ເຮັດດ້ວຍວັດສະດຸ ABS, ແກນບິກຍາວ 10cm ຄວາມໜາ 0,55cm ເຮັດດ້ວຍວັດສະດຸ PP, ຫົວບິກຍາວ 1,2cm ເສັ້ນຜ່າກາງ 0,25cm ເຮັດດ້ວຍວັດສະດຸ ທອງແດງ |  | 50.000 ກ້ານ |



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

| | | | |
|---|---|---|---|
| 4 | **ຖົງຜ້າ**<br>ສະກີນໂລໂກ້ ທຄຕລ ໜ້າ ແລະ ຫລັງ (ຜ້າຄາດແດງຕ້ອງບໍ່ອອກສີ ເວລາຊັກ)<br>ເນື້ອຜ້າ Canvas ຝອກຂາວ |  | 10.000 ຖົງ |
| 5 | **ເສື້ອໂປໂລ ທຄຕລ ສີຂາວ**<br>(ຊາຍ-ຍິງ)<br>ປັກແສ່ວ LOGO ແລະ ຂໍ້ມູນ ທຄຕລ 02 ຈຸດ |  | 2.300 ຜືນ |
| 6 | **ເສື້ອໂປໂລ** (ຊາຍ-ຍິງ) **ທຄຕລ** ປັກແສ່ວ ຄຳວ່າ **BCEL** 01 ຈຸດ |  | 1.000 ຜືນ<br>( ແຕ່ລະແບບຜະລິດ ຢ່າງລະ 250 ຜືນ) |
| 7 | **ຊຸດ GIFT SET**<br>- ປຶ້ມປົກໜັງ PU 1 ຫົວ ປ້ຳ LOGO ທຄຕລ.<br>- ບົກໃສ່ LOGO ທຄຕລ ທີ່ຝາ 1 ຈຸດ<br>- POWER BANK ສະກີນໂລໂກ້ ທຄຕລ ດ້ານ ຂວາມື 1ອັນ |  | 2.500 ຊຸດ |

❖ **ໝາຍເຫດ:** ສາມາດເຂົ້າມາເບິ່ງຕົວຢ່າງແທ້ ຫຼື ຫາກຕ້ອງການໃຫ້ສົ່ງຮູບພາບເພີ່ມເຕີມ ຫຼື VIDEO ຂອງເຄື່ອງຕົວຈິງສາມາດພົວພັນໄດ້ທີ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສນຍ ຊັ້ນ4 ຕຶກ C ແຕ່ວັນທີ 30/11/2020 -18/12/2020 ໃນໂມງລັດຖະການ.

❖ ຜູ້ສະໜອງສາມາດເລືອກປະມູນລາຍການໃດໜຶ່ງໃນຕາຕະລາງຂ້າງເທິງນີ້ໄດ້.

**ເງື່ອນໄຂຂອງຜູ້ສະໜອງ ທີ່ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບມີດັ່ງນີ້:**

❖ **ເອກະສານຊອງທີ 1 (ບໍ່ປິດຊອງ).**

1. ປະກອບເອກະສານໃນນາມນິຕິບຸກຄົນ ແລະ ດຳເນີນທຸລະກິດຢ່າງໜ້ອຍ 02 ປີຂື້ນໄປ ພ້ອມສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2019, ໃບຢັ້ງຢືນການເປັນຕົວແທນຈຳໜ່າຍ (ຖ້າມີ).
2. ຜູ້ສະໜອງຕ້ອງລະບຸລາຍລະອຽດສິນຄ້າ ພ້ອມທັງລະບຸເງື່ອນໄຂຕ່າງໆໃຫ້ຄົບຖ້ວນ ແລະ ກົງກັບຄວາມຕ້ອງການໃນຕາຕະລາງຂ້າງເທິງນີ້, ລະບຸຍີ່ຫໍ້, ແຫຼ່ງຜະລິດສິນຄ້າ ຫຼື ມີເອກະສານທີ່ກ່ຽວຂ້ອງ, ລະບຸໄລຍະເວລາໃນການຮັບປະກັນ, ລະບຸໄລຍະການຜະລິດ, ຜົນງານຜ່ານມາທີ່ເຄີຍສະໜອງສິນຄ້າປະເພດດັ່ງກ່າວໃຫ້ພາກສ່ວນອື່ນ, ພ້ອມທັງຄັດຕິດຕົວຢ່າງສິນຄ້າຕາມສະເປັກຂັ້ນເທິງຕິດຄັດມາສົ່ງກ່ອນ **ວັນທີ 21/12/2020.**

❖ **ເອກະສານຊອງທີ 2 (ປິດຊອງ).**

1. ໃບສະເໜີລາຄາໃຫ້ລະບຸລາຄາ/ຫົວໜ່ວຍ ແລະ ລວມອາກອນມູນຄ່າເພີ່ມ 10% (ມີບິນອາກອນຄົບຖ້ວນ) ທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ.
2. ໃນວັນພະຫັດ ວັນທີ **24/12/2020 ເວລາ 09:30** ໂມງ ແມ່ນມື້ເປີດຊອງປະມູນ ເຊິ່ງຜູ້ສະໜອງຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ແລະ ຕົວຢ່າງສິນຄ້າແຕ່ລະຊະນິດມາພ້ອມ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 3 ອາຄານ C (ເປີດຊອງຊ່ອງໜ້າກັບຄະນະກຳມະການ).
3. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 24/01/2021)** ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

❖ **ໝາຍເຫດ:** ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄ້ຳປະກັນການປະຕິບັດສັນຍາ ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.
- ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ບໍ່ປະກອບເອກະສານຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.

❖ **ການຊຳລະຈະຈ່າຍເປັນງວດດຽວ 100% ຂອງມູນຄ່າພາຫລັງສົ່ງສິນຄ້າຖືກຕ້ອງ ແລະ ຄົບຖ້ວນ.**

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ປະທານຄະນະກຳມະການປະມູນ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ວຽງສຸກ ຈູນທະວົງ

ສອບຖາມລາຍລະອຽດເພີ່ມເຕີມ: bidcommittee@bcel.com.la
ທ່ານ ນ. ຈັນມາລີ ພົມວົງສາ 020 558888576

ຮູບແບບ ຄັນຮົ່ມຂອງ BCEL  ຮົ່ມກັບດ້ານ

02

Side view






Top view



ຮູບແບບ ຄັນຮົ່ມຂອງ BCEL  Golf Umbella

01

Side view




Top view



ຮູບແບບບິກ ທຄຕລ







ຮູບແບບກະເປົາ

01




ໜ້າ

ຫຼັງ


ແບບເສື້ອ POLO ພະນັກງານ BCEL
ຮູບແບບ 04 ຂາວບໍ່ມີຖົງເສື້ອ


BCEL


BCEL


BCEL

BCEL


BCEL